HIỆP ĐỊNH
VỀ HỢP TÁC KINH TẾ, VĂN HÓA, KHOA HỌC KỸ THUẬT GIỮA CHÍNH PHỦ NƯỚC CỘNG HÒA XÃ HỘI CHỦ NGHĨA VIỆT NAM VÀ CHÍNH PHỦ NƯỚC CỘNG HÒA DÂN CHỦ NHÂN DÂN LÀO NĂM 2008

Quán triệt tinh thần và nội dung Hội đàm giữa Bộ Chính trị Đảng Cộng sản Việt Nam và Bộ Chính trị Đảng nhân dân cách mạng Lào ngày 09 tháng 01 năm 2008, tại Thủ đô Viêng-chăn, nước Cộng hòa dân chủ nhân dân Lào;

Căn cứ vào Hiệp định về hợp tác kinh tế, văn hóa, khoa học kỹ thuật giữa Chính phủ nước Cộng hòa xã hội chủ nghĩa Việt Nam và Chính phủ nước Cộng hòa dân chủ nhân dân Lào giai đoạn 2006-2010, ký ngày 04 tháng 01 năm 2006, tại Thủ đô Viêng-chăn;

Tiếp tục phát triển mối quan hệ hữu nghị, đoàn kết đặc biệt, hợp tác toàn diện giữa nước Cộng hòa xã hội chủ nghĩa Việt Nam và nước Cộng hòa dân chủ nhân dân Lào (sau đây gọi tắt là hai bên),

Hai bên thỏa thuận nội dung, chương trình hợp tác giữa hai nước năm 2008 như sau:

ĐIỀU 1

Vốn hợp tác phát triển

1.1. Căn cứ vào Điều 1 Hiệp định về hợp tác kinh tế, văn hóa, khoa học kỹ thuật giai đoạn 2006-2010 giữa Chính phủ nước Cộng hòa xã hội chủ nghĩa Việt Nam và Chính phủ nước Cộng hòa dân chủ nhân dân Lào, ký ngày 04 tháng 01 năm 2006 tại Viêng-chăn, Chính phủ nước Cộng hòa xã hội chủ nghĩa Việt Nam dành cho Chính phủ nước Cộng hòa dân chủ nhân dân Lào khoản viện trợ không hoàn lại năm 2008 là 230 (hai trăm ba mươi) tỷ đồng Việt Nam để thực hiện các nội dung được ghi tại Phụ lục 1 kèm theo Hiệp định này.

1.2. Theo đề nghị của Chính phủ Lào, Chính phủ Việt Nam đồng ý tăng thêm 300 tỷ đồng Việt Nam ngoài số 900 tỷ đồng Việt Nam đã

và học tiếng Việt ở các trường phổ thông dân tộc nội trú đã được Việt Nam giúp xây dựng ở các địa phương của Lào; tiếp tục cử giáo viên Việt Nam sang Lào dạy tiếng Việt cho con em Việt kiều tại Lào bằng nguồn kinh phí của Việt Nam; lập báo cáo dự án đầu tư và thực hiện xây dựng Trường Dân tộc nội trú tỉnh Hủa-phăn.

2.5. Phát triển nguồn nhân lực là ưu tiên hàng đầu trong quan hệ hợp tác lâu dài giữa hai nước, được triển khai thực hiện ở nhiều cấp độ (Trung ương, địa phương và doanh nghiệp), dưới nhiều hình thức, trên cơ sở này, hai bên khuyến khích việc đào tạo cán bộ, học sinh của mỗi bên ở các ngành, các bậc học bằng nguồn vốn tự túc của cá nhân hoặc bằng các nguồn vốn khác do các tổ chức, các nước khác tài trợ.

ĐIỀU 3

Hợp tác phát triển toàn diện và ổn định vùng biên giới hai nước

3.1. Hai bên phối hợp chặt chẽ tổ chức thực hiện mô hình sản xuất kết hợp nông, lâm nghiệp và khuyến khích đầu tư trồng và khai thác các sản phẩm cây công nghiệp tại các khu vực biên giới; ưu tiên các nguồn vốn để đầu tư các tuyến đường nối giữa hai nước, tiến hành quy hoạch phát triển kinh tế, xã hội dọc các tuyến đường đó; tạo điều kiện thuận lợi xây dựng và phát triển chợ biên giới, khu kinh tế cửa khẩu, thúc đẩy phát triển thương mại biên giới; bảo vệ rừng gắn với định canh, định cư, ngăn chặn việc di cư tự do.

3.2. Hai bên tiếp tục phối hợp quản lý biên giới và ngăn chặn việc gian lận thương mại, trốn lậu thuế, buôn bán trái phép.

3.3. Hai bên phối hợp thực hiện Dự án "Tăng dày và tôn tạo hệ thống mốc quốc giới Việt Nam-Lào" trên cơ sở nội dung tại Biên bản kỳ họp giữa hai đoàn đại biểu biên giới hai nước.

3.4. Theo đề nghị của phía Lào, phía Việt Nam giúp xây dựng Trạm Kiểm soát liên hợp Cửa khẩu quốc tế Phu-cưa tỉnh At-ta-pư.

bộ, đường không; phối hợp với phía Campuchia thực hiện chương trình du lịch "ba quốc gia một điểm đến".

5.4. Hai bên tiếp tục hợp tác trong lĩnh vực phòng chống các dịch bệnh lây lan và kiểm dịch y tế biên giới giữa hai nước có điều chỉnh cho phù hợp với Điều lệ Y tế quốc tế 2005.

Theo đề nghị của phía Lào, phía Việt Nam giúp nghiên cứu dự án xây dựng Trường Đại học Khoa học sức khỏe tại Lào.

5.5. Phía Việt Nam sẵn sàng cử chuyên gia và trao đổi kinh nghiệm về các vấn đề văn hóa, xã hội, việc làm, xóa đói giảm nghèo và hợp tác chặt chẽ kiểm soát phòng, chống buôn lậu và ma túy.

5.6. Hai bên tiếp tục phối hợp tìm kiếm, cất bốc và hồi hương hài cốt các liệt sỹ Việt Nam hy sinh qua các thời kỳ ở Lào.

ĐIỀU 6

Về lĩnh vực thương mại, đầu tư, tài chính, ngân hàng

6.1. Về thương mại:

- Hai bên thúc đẩy hợp tác thương mại, tăng kim ngạch xuất khẩu nhập khẩu giữa hai nước, dành ưu tiên ưu đãi cho nhau trên cơ sở quan hệ đặc biệt sẵn có; hoàn thành Đề án phát triển thương mại với dự kiến mức kim ngạch hai chiều đạt 1 tỷ USD vào năm 2010, 2 tỷ USD vào năm 2015 và 5 tỷ USD năm 2020, trình Chính phủ hai nước xem xét, quyết định vào đầu năm 2008.

- Tiếp tục thực hiện các cơ chế ưu đãi đã thỏa thuận về thuế suất thuế nhập khẩu đối với hàng hóa có xuất xứ từ hai nước và nghiên cứu mở rộng danh mục các mặt hàng được hưởng thuế suất bằng 0%.

- Hai bên tiếp tục trao đổi kinh nghiệm về các lĩnh vực cùng quan tâm trong quá trình hội nhập kinh tế quốc tế và khu vực (đặc biệt là kinh nghiệm gia nhập Tổ chức Thương mại thế giới), công tác quản lý thị trường.

- Hai bên thống nhất giao cho hai Bộ Công thương hai nước làm đầu mối phối hợp với các Bộ, ngành hữu quan nghiên cứu xây dựng cơ

Xê-ca-mản 1, Xê-ca-mản Xan-xay, Xê-ca-mản 4, Luông-pra-băng, Đăk-y-mơn và các dự án đã thỏa thuận khác, như: Nậm-mô, Xê-công 3, Nậm-cắn; hợp tác nghiên cứu xây dựng hệ thống truyền tải điện; phối hợp rà soát, xác định tiềm năng các dự án thủy điện, kể cả hệ thống thủy điện trên dòng Nậm-xăm, tiến tới ký kết bổ sung Hiệp định giữa hai Chính phủ về hợp tác phát triển các công trình năng lượng điện và mỏ đã ký ngày 19 tháng 12 năm 2006 từ mức 3.000 MW lên trên 5.000 MW.

Giao Bộ Năng lượng và Mỏ Lào và Bộ Công thương Việt Nam nghiên cứu thống nhất về danh mục các dự án thủy điện để trình Chính phủ hai bên phê duyệt trong Quý I năm 2008 và coi danh mục các dự án đã được Chính phủ phê duyệt là Phụ lục 4 kèm theo của Hiệp định này.

- Trong lĩnh vực tìm kiếm, thăm dò, khai thác và chế biến khoáng sản: Hai bên nhất trí thúc đẩy Vinachem triển khai lập báo cáo khả thi cho dự án khai thác muối ka li trên diện tích 10 km2 sớm trình phía Lào phê duyệt; phía Việt Nam đề nghị phía cấp phép cho Vinachem diện tích 11,2 km2 để thăm dò và 196,3 km2 để tìm kiếm mở rộng, tiến tới đầu tư và khai thác muối mỏ ka li ở tỉnh Khăm-muộn.

Hai bên nhất trí tạo điều kiện thuận lợi và cấp phép cho các doanh nghiệp Việt Nam thực hiện tìm kiếm thăm dò, đầu tư khai thác các loại khoáng sản: bô-xít tại vùng Đăk-chưng huyện Đăk-chưng tỉnh Xê-công, thăm dò bô-xít vùng Đăk-pooc huyện Xan-xay tỉnh At-ta-pư, thăm dò chì, kẽm tại vùng Đăk-yết huyện Xan-xay tỉnh At-ta-pư; thăm dò bô-xít vùng Thạ-tèng tỉnh Xê-công; thăm dò sắt, đa kim tại các tỉnh Xiêng-khoảng, Hủa-phăn và Viêng-chăn.

Phía Việt Nam đề nghị phía Lào xem xét hồ sơ và cấp phép cho một số dự án tìm kiếm, thăm dò và tiến tới khai thác đồng ở tỉnh At-ta-pư; than để sản xuất điện ở tỉnh Luông-nậm-thà và U-đôm-xay; đồng, chì, kẽm, thiếc, ăng-ti-moan ở các tỉnh Khăm-muộn, Hủa-phăn, Xiêng-khoảng, At-ta-pư, Chăm-pa-xắc, Xê-công, U-đôm-xay, Xay-nha-bu-ly; muối natri ở Xa-van-na-khẹt; ba-rít tại các tỉnh Xa-van-na-khét, Hủa-

6.3. Về tài chính, ngân hàng:

- Hai bên thống nhất trao đổi kinh nghiệm, đào tạo giúp Lào hình thành và phát triển thị trường chứng khoán;

- Hai bên khuyến khích các doanh nghiệp hợp tác thành lập công ty liên doanh trong lĩnh vực ngân hàng, bảo hiểm, dịch vụ tài chính.

6.4. Về viễn thông-công nghệ thông tin:

Hai bên thống nhất sớm cấp phép đầu tư và tạo điều kiện thuận lợi trong quá trình triển khai dự án của Liên doanh Star Telecom giữa VIETTEL và LAT và các dự án đầu tư khác trong lĩnh vực viễn thông-công nghệ thông tin.

ĐIỀU 7

Quản lý chương trình, dự án viện trợ

7.1. Quyết toán dứt điểm các dự án: hệ thống thủy lợi Đông-phô-xi, hệ thống thủy lợi Thà-phạ-noọng-phông; Trung tâm Bồi dưỡng cán bộ kinh tế kế hoạch Viêng-chăn.

7.2. Hai bên thống nhất phối hợp thường xuyên kiểm tra việc thực hiện các dự án hợp tác giữa hai nước.

ĐIỀU 8

Thực hiện các thỏa thuận

- Hai bên thống nhất sẽ triển khai và thường xuyên đôn đốc, kiểm tra, kiểm soát và báo cáo định kỳ việc thực hiện các thỏa thuận đã ký kết.

- Hai bên tiếp tục tạo thuận lợi thực hiện các dự án hợp tác liên kết giao thông vận tải giữa hai nước trong lĩnh vực đường bộ, đường không.

- Hai bên tiếp tục thực hiện Thỏa thuận về sử dụng Cảng Vũng Áng ký ngày 20 tháng 7 năm 2001 và phía Việt Nam tạo điều kiện thuận lợi và giảm phí để Lào sử dụng Cảng Vũng Áng có hiệu quả.

- Hai bên tiếp tục nghiên cứu, đề xuất nhiều cơ chế, chính sách cho phù hợp với quan hệ hai nước và tình hình của mỗi nước, thực hiện có hiệu quả Thỏa thuận Hà Nội 2007; sớm xây dựng chiến lược phát triển quan hệ hai nước giai đoạn 2011-2020 là căn cứ để lập kế hoạch hợp tác 5 năm giữa hai nước.

ĐIỀU 9

Điều khoản thi hành

Hiệp định này có hiệu lực từ ngày ký đến ngày Hiệp định kế tiếp được ký kết. Trong thời gian thực hiện, Hiệp định này có thể được bổ sung, sửa đổi theo sự thỏa thuận bằng văn bản của Chính phủ hai nước. Các Phụ lục kèm theo là bộ phận không tách rời nội dung Hiệp định.

Làm tại Thủ đô Viêng-chăn, ngày 10 tháng 01 năm 2008 thành hai bản bằng tiếng Việt và tiếng Lào, cả hai bản đều có giá trị như nhau./.

TM. CHÍNH PHỦ NƯỚC CỘNG HÒA XÃ HỘI CHỦ NGHĨA VIỆT NAM	**TM. CHÍNH PHỦ NƯỚC CỘNG HÒA DÂN CHỦ NHÂN DÂN LÀO**
NGUYỄN SINH HÙNG	**XỐM-XÀ-VẠT LÈNH-XA-VÁT**
Phó Thủ tướng thường trực	**Phó Thủ tướng thường trực**

Phụ lục 1

Danh mục các chương trình, dự án sử dụng vốn viện trợ Chính phủ Việt Nam dành cho Chính phủ Lào năm 2008

Đơn vị: Triệu đồng VN

Số TT	Chương trình dự án	Thời gian thực hiện 2008-2010	Tổng mức đầu tư	Vốn năm 2008
I.	**Đào tạo cán bộ, học sinh Lào tại Việt Nam**	**2006-2010**	**490.000**	**100.000**
II.	**Các chương trình, dự án:**			
A.	**Các dự án quyết toán:**			**26.780**
1	Xây dựng hệ thống thủy lợi Đông-phu-xi	2000-2008	64.924	8.490
2	Xây dựng hệ thống thủy lợi Thà-phạ-nông-phông	2001-2008	58.390	9.310
3	Trung tâm Bồi dưỡng cán bộ kinh tế kế hoạch Viêng-chăn	2003-2005		8.980
B.	**Các dự án chuyển tiếp:**			**68.220**
1	Đào tạo cán bộ tài chính tại Lào	2005-2008	4.000	1.000
2	Xây dựng Trường Cao đẳng tài chính Đông-khăm-xạng	2007-2008	59.080	26.462
3	Xây dựng Trung tâm Huấn luyện thể dục thể thao quốc gia Lào	2007-2009	68.824	31.000
4	Xây dựng bổ sung, hoàn thiện Trường Dạy nghề Bò-kẹo	2007-2008	12.358	2.358
5	Nâng cao năng lực ngành cơ yếu Lào	2007-2008	4.600	1.600
6	Điều tra khoáng sản Nam Lào	2005-2008	16.000	3.000
7	Lập Báo cáo dự án đầu tư đường sắt Mụ Giạ - Thà-khẹc	2007-2008	1.100	800
8	Quy hoạch phân vùng trồng cây công nghiệp ở Nam Lào	2007-2009	4.400	2.000
9	Biên dịch kinh điển Mác, Ăng-ghen, Lê-nin, Hồ Chí Minh sang tiếng Lào	2008-2011	11.850	2.000 (vốn'2007)
10	Sửa chữa nâng cấp Bảo tàng Cay-xỏn Phôm-vi-hản	2008-2009	32.753	15.000 (vốn '2007)
11	Biên soạn tài liệu lịch sử truyền thống quan hệ đặc biệt Việt-Lào	2007-		1.000 (vốn'2007)
12	Xây dựng Trạm chuyển tiếp khu vực tại Chăm-pa-xắc	2001-2009	40.227	10.800 (vốn '2007)

Phụ lục 2

Dự kiến kế hoạch sử dụng vốn viện trợ bổ sung 300 tỷ đồng Việt Nam của Chính phủ Việt Nam dành cho Chính phủ Lào trong các năm 2008, 2009 và 2010

Đơn vị: Triệu đồng VN

Số TT	Các chương trình, dự án	Dự kiến tổng mức vốn	Ghi chú
1	Xây dựng Trạm liên kiểm Cửa khẩu quốc tế Phu-cưa	18.000	
2	Xây dựng Trạm phát sóng phát thanh và chuyển tiếp hình khu vực tỉnh Luông-pra-băng	41.000	
3	Quy hoạch phân vùng trồng cây công nghiệp Nam Lào	5.000	
4	Đầu tư khôi phục Xưởng in Quân đội nhân dân Lào	15.000	
5	Hỗ trợ công tác bảo vệ bà mẹ và trẻ em	1.000	
6	Đầu tư xây dựng Học viện Chính trị-Hành chính quốc gia Lào	47.000	
7	Xây dựng Trung tâm Lưu trữ quốc gia Lào	20.000	
8	Tăng dày và tôn tạo mốc quốc giới Việt Nam-Lào	72.000	thực hiện 7 năm, từ năm 2008, 24 tỷ đồng VN/năm
9	Xây dựng Công viên Xay-xẹt-thả ở Quảng trường Thạt Luổng	81.000	khoảng 5 triệu USD
	Tổng cộng:	**300.000**	

	Văn hóa			2	1		
8	**Lĩnh vực đối ngoại**						
	Quan hệ quốc tế			1			
	Luật quốc tế			1			
9	**Tài chính**						
	Ngành tài chính			1			
	Kinh tế tài chính			1	1		
10	**Ngành Y tế**						
	Đông Y			1			
	Quản lý dược liệu			1			
	Y tế				1		
	Nha khoa			1			
11	**Ngành bưu chính viễn thông**						
	Tin học viễn thông			2			
IV	**Ngành giáo dục văn hóa, thể thao**	158					
1	Phương pháp dạy toán trung học	15				15	3 tháng
2	Quản lý giáo dục và bồi dưỡng giáo viên chuyên ngành	17				17	3 tháng
3	Tập huấn thể thao	100				100	6 tháng
4	Công tác kiểm soát	17				17	3 tháng
5	Tập huấn làm chân tay giả	9				9	6 tháng
V	**Dự bị tiếng Việt vào đại học (bao gồm 50 suất chính sách)**	131					
1	Tổ chức tại Học viện chính trị khu vực I		20				
2	Chính trị tại Học viện Báo chí-Tuyên truyền		20				
3	Hành chính tại Học viện Hành chính quốc gia		20				
4	**Ngành nông nghiệp**						
	Thủy lợi		1				
	Côn trùng		1				
	Thú y		1				
	Cây ăn quả		1				
	Trồng cây cao su		1				
5	**Ngành năng lượng khoáng sản**						
	Thăm dò khoáng sản		2				
	Chế biến khoáng sản		3				
	Khai thác khoáng sản		2				
	Phân tích khoáng sản		2				
	Luật về khoáng sản		2				
	Bảo vệ môi trường khoáng sản		2				
	Phân tích khí thải		2				
	Kinh tế khoáng sản		2				
	Nhiệt điện		1				
	Thủy điện		1				
	Quản lý kinh tế năng lượng		2				
6	**Ngành kế hoạch**						
	Lập kế hoạch và quản lý dự án		2				
7	**Ngành văn hóa**						
	Phóng viên (nhà báo)		5				
	Làm phim		2				
8	**Ngành công thương**						

ສັນຍາ

ວ່າດ້ວຍການຮ່ວມມື ດ້ານເສດຖະກິດ, ວັດທະນະທຳ, ວິທະຍາສາດ - ເຕັກນິກ ລະຫວ່າງ ລັດຖະບານ ສາທາລະນະລັດ ສັງຄົມນິຍົມຫວຽດນາມ ແລະ ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະຈຳປີ 2008

ປະຕິບັດຕາມຈິດໃຈ ແລະ ເນື້ອໃນການພົບປະ ລະຫວ່າງກົມການເມືອງສູນກາງພັກກອມມູນິດ ຫວຽດນາມ ແລະ ກົມການເມືອງສູນກາງພັກປະຊາຊົນປະຕິວັດລາວ, ຄັ້ງວັນທີ 09 ມັງກອນ (01) ປີ 2008 ທີ່ນະຄອນຫລວງວຽງຈັນ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ອີງຕາມສັນຍາວ່າດ້ວຍການຮ່ວມມືດ້ານເສດຖະກິດ, ວັດທະນະທຳ, ວິທະຍາສາດ - ເຕັກນິກ ລະຫວ່າງ ລັດຖະບານ ສາທາລະນະລັດ ສັງຄົມນິຍົມຫວຽດນາມ ແລະ ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄລຍະ 2006-2010 ທີ່ໄດ້ເຊັນກັນຄັ້ງວັນທີ 04 ມັງກອນ (01) ປີ 2006 ທີ່ນະຄອນຫລວງວຽງຈັນ.

ເພື່ອສືບຕໍ່ເພີ່ມທະວີສາຍພົວພັນມິດຕະພາບ, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສາທາລະນະລັດ ສັງຄົມນິຍົມຫວຽດນາມ ແລະ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ຕໍ່ໄປນີ້ ເອີ້ນຫຍໍ້ວ່າສອງຝ່າຍ).

ສອງຝ່າຍໄດ້ຕົກລົງກ່ຽວກັບເນື້ອໃນ ແລະ ແຜນການຮ່ວມມື ລະຫວ່າງສອງປະເທດ ປະຈຳປີ 2008 ດັ່ງລຸ່ມນີ້:

ມາດຕາ 1

ທຶນຮ່ວມມືພັດທະນາ

1.1- ອີງຕາມມາດຕາ 1 ຂອງສັນຍາວ່າດ້ວຍການຮ່ວມມືດ້ານເສດຖະກິດ, ວັດທະນະທຳ, ວິທະຍາສາດ - ເຕັກນິກ ໄລຍະປີ 2006 - 2010 ລະຫວ່າງ ລັດຖະບານ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ແລະ ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ທີ່ໄດ້ລົງນາມຄັ້ງວັນທີ 04 ມັງກອນ(01) ປີ 2006 ທີ່ນະຄອນຫລວງວຽງຈັນ, ລັດຖະບານ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ໃຫ້ການຊ່ວຍເຫຼືອລ້ຳ ໃຫ້ແກ່ລັດຖະບານສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ໃນປີ 2008 ຈຳນວນເງິນ 230 (ສອງຮ້ອຍສາມສິບ) ຕື້ດົ່ງຫວຽດນາມ ເພື່ອນຳໃຊ້ເຂົ້າໃນການປະຕິບັດ ບັນດາເນື້ອໃນ ທີ່ໄດ້ລະບຸໄວ້ໃນສາລະບານເລກ 1 ຄັດຕິດສັນຍາສະບັບນີ້.

1.2- ຕາມການສະເໜີຂອງລັດຖະບານລາວ, ລັດຖະບານຫວຽດນາມ ເຫັນດີເພີ່ມຕື່ມທຶນ ຈຳນວນ 300 ຕື້ດົ່ງຫວຽດນາມ ນອກຈາກ ຈຳນວນ 900 ຕື້ດົ່ງຫວຽດນາມ ທີ່ໄດ້ຕົກລົງໃນຂອບສັນຍາ ຂອງໄລຍະ 2006 - 2010, ເພື່ອປະຕິບັດກິດຈະການ, ໂຄງການ ທີ່ຈຳເປັນຈຳນວນໜຶ່ງ ໃນຊຸມປີ 2008 - 2010 ຕາມບັນຊີບັນດາໂຄງການ ທີ່ໄດ້ລະບຸໄວ້ຢູ່ໃນສາລະບານເລກ 2 ຂອງສັນຍາສະບັບນີ້. ລັດຖະບານຫວຽດນາມ ຈະສະເໜີສະພາແຫ່ງຊາດຫວຽດນາມ ຮັບຮອງເອົາຈຳນວນທຶນເພີ່ມຕື່ມ ດັ່ງກ່າວ.

ມາດຕາ 2

ການກໍ່ສ້າງ ແລະ ຍົກສູງຄຸນນະພາບການກໍ່ສ້າງຊັບພະຍາກອນມະນຸດ

2.1- ສອງຝ່າຍສືບຕໍ່ປະຕິບັດອະນຸສັນຍາວ່າດ້ວຍການຮ່ວມມື ດ້ານການກໍ່ສ້າງພະນັກງານ ທີ່ ໄດ້ເຊັນກັນຄັ້ງວັນທີ 15 ເດືອນມັງກອນ (01) ປີ 2002.

ປີ 2008, ລັດຖະບານຫວຽດນາມ ໃຫ້ທຶນການສຶກສາແກ່ລາວ ຈຳນວນ 300 ທຶນ ຮຽນລະບົບ ໄລຍະຍາວ ຕາມຫລັກສູດປົກກະຕິ ຂັ້ນມະຫາວິທະຍາໄລ, ເໜືອມະຫາວິທະຍາໄລ; 250 ທຶນ ຮຽນ ລະບົບບຳລຸງໄລຍະ ສັ້ນຢູ່ຫວຽດນາມ (ນັບທັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ) ແລະ ຈຳນວນ 100 ທຶນ ໄລຍະສັ້ນ ເພື່ອຊ່ວຍລາວ ຝຶກດ້ານກິລາ, ການຍະກຳ ແລະ ຈຳນວນ 10 ທຶນ ໃຫ້ແກ່ລູກ ຫລານຊາວ ຫວຽດນາມຕ່າງດ້າວຢູ່ລາວ.

ໃຫ້ບູລິມະສິດແກ່ລາວ ໃນການບຳລຸງກໍ່ສ້າງພະນັກງານການເມືອງ, ພະນັກງານຄຸ້ມຄອງຕາມ ຂັ້ນ ແລະ ຂັ້ນຮຽນຕ່າງໆ; ພະນັກງານທ້ອງຖິ່ນ ຢູ່ບັນດາແຂວງຂອງລາວ ທີ່ມີຊາຍແດນຕິດກັບ ຫວຽດນາມ; ພະນັກງານຂອງບັນດາກະຊວງ, ຂະແໜງການ, ທ້ອງຖິ່ນ ທີ່ໄດ້ຮຽນ ແລະ ບຳລຸງສ້າງຢູ່ ຫວຽດນາມ ແລະ ພະນັກງານ ທີ່ກຳລັງເຮັດວຽກຢູ່ບັນດາກິດຈະການ, ໂຄງການຮ່ວມມືຕ່າງໆ ລະຫວ່າງ ສອງຝ່າຍ.

ການແບ່ງທຶນການສຶກສາຕາມຂະແໜງວິຊາລະອຽດ ທີ່ຝ່າຍລາວສະເໜີ ໄດ້ລະບຸໃນສາລະບານ ເລກ 3 ຂອງສັນຍາສະບັບນີ້.

2.2- ລັດຖະບານລາວ ໃຫ້ທຶນການສຶກສາ ຈຳນວນ 30 ທຶນ ໃຫ້ແກ່ພະນັກງານ, ນັກສຶກສາ ຫວຽດນາມ ຮຽນລະບົບໄລຍະຍາວ ຕາມຫລັກສູດປົກກະຕິໃນຂະແໜງວິຊາຕ່າງໆຢູ່ລາວ.

2.3- ລັດຖະບານຫວຽດນາມ ສືບຕໍ່ຊ່ວຍລາວກໍ່ສ້າງພະນັກງານການເງິນຢູ່ລາວ; ກໍ່ສ້າງໂຮງຮຽນວິທະຍາໄລການເງິນດ້ວຍຄໍາຊ້າງ; ແປປຶ້ມນິພົນມາກ - ອ້ຽແກນ - ເລນິນ ແລະ ແນວຄິດໂຮ່ຈິມິນ ເປັນພາສາລາວ.

2.4- ສອງຝ່າຍ ສືບຕໍ່ລົງທຶນຍົກລະດັບພື້ນຖານວັດຖຸ ຮັບໃຊ້ການຮຽນ ແລະ ການດໍາລົງຊີວິດໃຫ້ແກ່ພະນັກງານ - ນັກສຶກສາ ຂອງແຕ່ລະຝ່າຍ. ສ້າງຫລັກສູດພາສາຫວຽດ ແລະ ປຶ້ມວັດຈະນານຸກົມລາວ - ຫວຽດ, ຫວຽດ - ລາວ ໃຫ້ສໍາເລັດ ເພື່ອຮັບໃຊ້ການສອນ ແລະ ການຮຽນພາສາຫວຽດ ຢູ່ບັນດາໂຮງຮຽນສາມັນກິນນອນຊົນເຜົ່າ ທີ່ຫວຽດນາມໄດ້ໃຫ້ການຊ່ວຍເຫລືອທ້ອງຖິ່ນຕ່າງໆຂອງລາວ; ສືບຕໍ່ສົ່ງຄູອາຈານຫວຽດນາມມາສອນພາສາຫວຽດ ໃຫ້ແກ່ລູກຫລານຊາວຫວຽດນາມຕ່າງດ້າວຢູ່ລາວ ດ້ວຍງົບປະມານຂອງຫວຽດນາມ; ສ້າງບົດວິພາກໂຄງການລົງທຶນ ແລະ ດໍາເນີນການກໍ່ສ້າງໂຮງຮຽນກິນນອນຊົນເຜົ່າແຂວງຫົວພັນ.

2.5- ການພັດທະນາຊັບພະຍາກອນມະນຸດ ເຊິ່ງຖືເປັນບູລິມະສິດອັນດັບໜຶ່ງ ໃນການພົວພັນຮ່ວມມືຍາວນານ ລະຫວ່າງສອງປະເທດນັ້ນ ແມ່ນໃຫ້ຂົນຂວາຍປະຕິບັດໃນຫລາຍຂັ້ນ (ສູນກາງ, ທ້ອງຖິ່ນ ແລະ ທຸລະກິດ) ດ້ວຍຫລາຍຮູບການ, ບົນພື້ນຖານດັ່ງກ່າວ, ສອງຝ່າຍສົ່ງເສີມການກໍ່ສ້າງພະນັກງານ, ນັກສຶກສາຂອງແຕ່ລະຝ່າຍ ໃນຂະແໜງວິຊາ ແລະ ຊັ້ນຮຽນຕ່າງໆ ດ້ວຍແຫ່ລ່ງທຶນສ່ວນຕົວ ຫລື ດ້ວຍແຫລ່ງທຶນອື່ນໆ ເຊິ່ງບັນດາອົງການຈັດຕັ້ງ ແລະ ປະເທດຕ່າງໆຊ່ວຍເຫລືອ.

ມາດຕາ 3

ການຮ່ວມມືດ້ານການພັດທະນາຮອບດ້ານເຂດຊາຍແດນ ລະຫວ່າງສອງປະເທດ ໃຫ້ມີສະຖຽນລະພາບ

3.1- ສອງຝ່າຍປະສານສົມທົບໃຫ້ແໜ້ນແຟ້ນ ເພື່ອສ້າງຕົວແບບການຜະລິດ ໂດຍສົມທົບລະຫວ່າງ ກະສິກໍາ, ປ່າໄມ້ ແລະ ສິ່ງເສີມການລົງທຶນ ໃນການປູກ ແລະ ຂຸດຄົ້ນຜະລິດຕະພັນ ຈາກຕົ້ນໄມ້ອຸດສາຫະກໍາຢູ່ບັນດາເຂດຊາຍແດນ; ບູລິມະສິດແຫລ່ງທຶນ ເພື່ອລົງທຶນໃສ່ບັນດາເສັ້ນທາງເຊື່ອມຕໍ່ລະຫວ່າງສອງປະເທດ; ດໍາເນີນການສ້າງແຜນການກ່ຽວກັບການພັດທະນາເສດຖະກິດ - ສັງຄົມ ລຽບຕາມບັນດາເສັ້ນທາງດັ່ງກ່າວ; ສ້າງເງື່ອນໄຂສະດວກ ເພື່ອສ້າງ ແລະ ພັດທະນາຕະຫລາດຊາຍແດນ, ເຂດເສດຖະກິດດ່ານຊາຍແດນ, ຊຸກຍູ້ການພັດທະນາການຄ້າຊາຍແດນ; ປົກປັກຮັກສາປ່າໄມ້ ຕິດພັນກັບການຈັດຕັ້ງພູມລໍາເນົາຄົງທີ່, ສະກັດກັ້ນການເຄື່ອນຍ້າຍຕັ້ງພູມລໍາເນົາຕາມລໍາພັງໃຈ.

3.2- ສອງຝ່າຍສືບຕໍ່ປະສານສົມທົບ ຄຸ້ມຄອງຊາຍແດນ ແລະ ສະກັດກັ້ນ ການຄ້າຂາຍຫລົບຫລີກພາສີ, ໜີພາສີ; ການຄ້າຂາຍ ທີ່ຜິດກົດໝາຍ.

3.3- ສອງຝ່າຍປະສານສົມທົບປະຕິບັດໂຄງການ " ປັກຫລັກໝາຍຖີ່ ແລະ ບູລະນະ ລະບົບຫລັກໝາຍຊາຍແດນປະເທດຫວຽດນາມ - ລາວ " ບົນພື້ນຖານເນື້ອໃນຂອງບົດບັນທຶກກອງປະຊຸມລະຫວ່າງຄະນະກຳມະການຊາຍແດນສອງປະເທດ.

3.4- ຕາມການສະເໜີຂອງຝ່າຍລາວ, ຝ່າຍຫວຽດນາມ ຍິນດີຊ່ວຍກໍ່ສ້າງດ່ານຫວດກາສາກົນ ພູເກືອ, ແຂວງອັດຕະປື.

ມາດຕາ 4

ການຮ່ວມມືດ້ານກະສິກຳ, ປ່າໄມ້, ການປະມົງ, ຊັບພະຍາກອນ, ສິ່ງແວດລ້ອມ

4.1- ສອງຝ່າຍສືບຕໍ່ຊຸກຍູ້ໂຄງການຮ່ວມມື ແລະ ແລກປ່ຽນບົດຮຽນ ໃນຂົງເຂດກະສິກຳ, ການປະມົງ, ປ່າໄມ້, ອຸຕຸນິຍົມ ອຸທົກກະສາດ, ສິ່ງແວດລ້ອມ, ການຄຸ້ມຄອງຊັບພະຍາກອນ,... ດ້ວຍຫລາຍຮູບການ.

4.2- ສອງຝ່າຍປະຕິບັດໃຫ້ສຳເລັດການຟື້ນຟູລະບົບຊົນລະປະທານກະຕຶບ ແລະ ສູນຜະລິດແນວພັນໂພນງາມ ຂອງໂຄງການພັດທະນາກະສິກຳ ແລະ ຊົນນະບົດຈຳປາສັກ. ຜັນຂະຫຍາຍປະຕິບັດໂຄງການແບ່ງເຂດປູກຕົ້ນໄມ້ອຸດສາຫະກຳ ຢູ່ພາກໃຕ້ລາວ ແລະ ແບ່ງເຂດກະສິກຳທົ່ວປະເທດ.

ມາດຕາ 5

ການຮ່ວມມືດ້ານວັດທະນະທຳ, ກິລາ, ທ່ອງທ່ຽວ, ຖະແຫລງຂ່າວ, ສາທາລະນາສຸກ, ສັງຄົມ

5.1- ສອງຝ່າຍເປັນເອກະພາບ ເພີ້ມເວລາການຖ່າຍທອດທີວລອງລາຍການຂຽນເປັນພາສາລາວ ປະກອບໃນລາຍການໂທລະພາບຂອງຫວຽດນາມ ແລະ ພາກເປັນພາສາລາວ ໃນລາຍການຖ່າຍທອດວິທະຍຸກະຈາຍສຽງຂອງຫວຽດນາມ ຢູ່ລາວ.

5.2- ສອງຝ່າຍສືບຕໍ່ປະສານສົມທົບປະຕິບັດໂຄງການສ້ອມແປງ, ຍົກລະດັບຫໍພິພິທະພັນໄກສອນ ພົມວິຫານ; ຄົ້ນຄ້ວາ ແລະ ຮຽບຮຽງບັນດາເອກະສານປະຫວັດສາດ ກ່ຽວກັບການພົວພັນມິດຕະພາບ, ຄວາມສາມັກຄີພິເສດທີ່ເປັນມູນເຊື້ອລະຫວ່າງສອງຊາດຫວຽດນາມ-ລາວ; ປະຕິບັດໂຄງການກໍ່ສ້າງສະຖານີຖ່າຍທອດວິທະຍຸ ແລະ ໂທລະພາບເຂດ ຢູ່ແຂວງຈຳປາສັກ ໃຫ້ສຳເລັດ ແລະ ກະກຽມລົງທຶນໃສ່ໂຄງການກໍ່ສ້າງສະຖານີຖ່າຍທອດວິທະຍຸ ແລະ ໂທລະພາບເຂດ ຢູ່ແຂວງຫລວງພະບາງ;

3.2- ສອງຝ່າຍສືບຕໍ່ປະສານສົມທົບ ຄຸ້ມຄອງຊາຍແດນ ແລະ ສະກັດກັ້ນ ການຄ້າຂາຍຫລົບຫລີກພາສີ, ໜີພາສີ; ການຄ້າຂາຍ ທີ່ຜິດກົດໝາຍ.

3.3- ສອງຝ່າຍປະສານສົມທົບປະຕິບັດໂຄງການ " ປັກຫລັກໝາຍຖີ ແລະ ບູລະນະ ລະບົບຫລັກໝາຍຊາຍແດນປະເທດຫວຽດນາມ - ລາວ " ບົນພື້ນຖານເນື້ອໃນຂອງບົດບັນທຶກກອງປະຊຸມລະຫວ່າງຄະນະກຳມະການຊາຍແດນສອງປະເທດ.

3.4- ຕາມການສະເໜີຂອງຝ່າຍລາວ, ຝ່າຍຫວຽດນາມ ຍິນດີຊ່ວຍກໍ່ສ້າງດ່ານຜ່ານແດນສາກົນ ພູເກືອ, ແຂວງອັດຕະປື.

ມາດຕາ 4

ການຮ່ວມມືດ້ານກະສິກຳ, ປ່າໄມ້, ການປະມົງ, ຊັບພະຍາກອນ, ສິ່ງແວດລ້ອມ

4.1- ສອງຝ່າຍສືບຕໍ່ຊຸກຍູ້ໂຄງການຮ່ວມມື ແລະ ແລກປ່ຽນບົດຮຽນ ໃນຂົງເຂດກະສິກຳ, ການປະມົງ, ປ່າໄມ້, ອຸຕຸນິຍົມ ອຸທົກກະສາດ, ສິ່ງແວດລ້ອມ, ການຄຸ້ມຄອງຊັບພະຍາກອນ,... ດ້ວຍຫລາຍຮູບການ.

4.2- ສອງຝ່າຍປະຕິບັດໃຫ້ສຳເລັດການຟື້ນຟູລະບົບຊົນລະປະທານກະຕຶບ ແລະ ສູນຜະລິດແນວພັນໂພນງາມ ຂອງໂຄງການພັດທະນາກະສິກຳ ແລະ ຊົນນະບົດຈຳປາສັກ. ຂັ້ນຂະຫຍາຍປະຕິບັດໂຄງການແບ່ງເຂດປູກຕົ້ນໄມ້ອຸດສາຫະກຳ ຢູ່ພາກໃຕ້ລາວ ແລະ ແບ່ງເຂດກະສິກຳທົ່ວປະເທດ.

ມາດຕາ 5

ການຮ່ວມມືດ້ານວັດທະນະທຳ, ກິລາ, ທ່ອງທ່ຽວ, ຖະແຫລງຂ່າວ, ສາທາລະນາສຸກ, ສັງຄົມ

5.1- ສອງຝ່າຍເປັນເອກະພາບ ເພີ້ມເວລາການຖ່າຍທອດທິດລອງລາຍການຂຽນເປັນພາສາລາວ ປະກອບໃນລາຍການໂທລະພາບຂອງຫວຽດນາມ ແລະ ພາກເປັນພາສາລາວ ໃນລາຍການຖ່າຍທອດວິທະຍຸກະຈາຍສຽງຂອງຫວຽດນາມ ຢູ່ລາວ.

5.2- ສອງຝ່າຍສືບຕໍ່ປະສານສົມທົບປະຕິບັດໂຄງການສ້ອມແປງ, ຍົກລະດັບຫໍພິພິທະພັນໄກສອນ ພົມວິຫານ; ຄົ້ນຄ້ວາ ແລະ ຮຽບຮຽງບັນດາເອກະສານປະຫວັດສາດ ກ່ຽວກັບການພົວພັນມິດຕະພາບ, ຄວາມສາມັກຄີພິເສດທີ່ເປັນມູນເຊື້ອລະຫວ່າງສອງຊາດຫວຽດນາມ-ລາວ; ປະຕິບັດໂຄງການກໍ່ສ້າງສະຖານີຖ່າຍທອດວິທະຍຸ ແລະ ໂທລະພາບເຂດ ຢູ່ແຂວງຈຳປາສັກ ໃຫ້ສຳເລັດ ແລະ ກະກຽມລົງທຶນໃສ່ໂຄງການກໍ່ສ້າງສະຖານີຖ່າຍທອດວິທະຍຸ ແລະ ໂທລະພາບເຂດ ຢູ່ແຂວງຫລວງພະບາງ;

ປະຕິບັດການກໍ່ສ້າງສູນຝຶກກິລາແຫ່ງຊາດລາວ ໃຫ້ສຳເລັດ ແລະ ມອບ-ຮັບໃຫ້ຝ່າຍລາວ ໃນທ້າຍປີ 2008; ຂັ້ນຂະຫຍາຍໂຄງການກໍ່ສ້າງໂຮງຮຽນສີລະປະ-ດົນຕີແຫ່ງຊາດລາວ ຢູ່ນະຄອນຫລວງວຽງຈັນ.

5.3- ສອງຝ່າຍສືບຕໍ່ຂັ້ນຂະຫຍາຍ ບັນດາການເຄື່ອນໄຫວໂຄສະນາສົ່ງເສີມການທ່ອງທ່ຽວ, ບັນດາລາຍການທ່ອງທ່ຽວຄົບວົງຈອນ ແລະ ການທ່ອງທ່ຽວເຊື່ອມຕໍ່ ລະຫວ່າງສອງປະເທດ; ສ້າງ ເງື່ອນໄຂ ຕອບສະໜອງຄວາມຕ້ອງການດ້ານການທ່ອງທ່ຽວຂອງປະຊາຊົນສອງປະເທດ ແລະ ນັກທ່ອງ ທ່ຽວ ຈາກປະເທດທີສາມ ໄປມາລະຫວ່າງສອງປະເທດ ດ້ວຍພາຫະນະທາງບົກ, ທາງອາກາດ; ປະສານ ສົມທົບກັບຝ່າຍກຳປູເຈຍ ປະຕິບັດລາຍການທ່ອງທ່ຽວ "ສາມປະເທດ - ຈຸດໝາຍປາຍທາງທ່ອງທ່ຽວ ອັນດຽວ".

5.4- ສອງຝ່າຍສືບຕໍ່ຮ່ວມມືໃນຂົງເຂດປ້ອງກັນ, ຄວບຄຸມ ແລະ ຕ້ານການລະບາດ ຂອງພະ ຍາດພະຍຸ ຕາມຊາຍແດນ ລະຫວ່າງສອງປະເທດ ໂດຍມີການປັບປຸງໃຫ້ສອດຄ່ອງກັບລະບຽບການ ສາທາລະນະສຸກສາກົນ ປີ 2005.

ຕາມການສະເໜີຂອງຝ່າຍລາວ, ຝ່າຍຫວຽດນາມ ຍິນດີຊ່ວຍຄົ້ນຄ້ວາກ່ຽວກັບໂຄງການສ້າງ ມະຫາວິທະຍາໄລວິທະຍາສາດສຸຂະພາບຢູ່ລາວ.

5.5- ຝ່າຍຫວຽດນາມ ກຽມພ້ອມສົ່ງຊ່ຽວຊານມາຊ່ວຍລາວ ແລະ ແລກປ່ຽນບົດຮຽນກ່ຽວກັບ ບັນຫາວັດທະນະທຳ, ສັງຄົມ, ບັນຫາວຽກເຮັດງານທຳ, ການຫລຸດຜ່ອນຄວາມທຸກຍາກ ແລະ ຮ່ວມມື ຢ່າງແໜ້ນແຟ້ນໃນການກວດກາ, ສະກັດກັ້ນການຄ້າຂາຍເຖື່ອນ ແລະ ການຄ້າຂາຍຢາເສບຕິດ.

5.6- ສອງຝ່າຍ ສືບຕໍ່ປະສານສົມທົບ ຊອກຄົ້ນ, ເກັບກູ້, ທ້ອນໂຮມອັດຖິ ຂອງທະຫານອາສາ ສະໝັກຫວຽດນາມ ທີ່ເສຍສະຫລະຊີວິດໃນປ່າສົງຄາມຢູ່ລາວ ເພື່ອຈັດສົ່ງກັບຄືນປະເທດ.

ມາດຕາ 6

ການຮ່ວມມືດ້ານການຄ້າ, ການລົງທຶນ, ການເງິນ, ທະນາຄານ

6.1- ດ້ານການຄ້າ:

- ສອງຝ່າຍຊຸກຍູ້ການຮ່ວມມື ດ້ານການຄ້າ, ເພີ່ມມູນຄ່າຂາອອກ - ຂາເຂົ້າ ລະຫວ່າງສອງ ປະເທດ, ໃຫ້ບູລິມະສິດຜ່ອນຜັນແກ່ກັນ ແລະ ກັນ ບົນພື້ນຖານການພົວພັນພິເສດທີ່ມີຢູ່ແລ້ວ; ສ້າງໃຫ້ ສຳເລັດໂຄງການພັດທະນາດ້ານການຄ້າ ຕາມເປົ້າໝາຍຄາດຄະເນມູນຄ່າການຄ້າ ລະຫວ່າງສອງ ປະເທດ ໃຫ້ບັນລຸ 1 ຕື້ໂດລາສະຫະລັດ ໃນປີ 2010, 2 ຕື້ໂດລາສະຫະລັດ ໃນປີ 2015 ແລະ ຮອດປີ

2020 ໃຫ້ບັນລຸ 5 ຕື້ໂດລາສະຫະລັດ ເພື່ອນຳສະເໜີລັດຖະບານສອງປະເທດ ພິຈາລະນາຕົກລົງ ໃນ ຕົ້ນປີ 2008.

- ສືບຕໍ່ປະຕິບັດບັນດາກົນໄກ ການໃຫ້ບູລິມະສິດອັດຕາພາສີຂາເຂົ້າເຊິ່ງກັນ ແລະ ກັນ ສຳລັບ ສິນຄ້າທີ່ມີແຫລ່ງກຳເນີດຈາກສອງປະເທດ ຕາມທີ່ໄດ້ຕົກລົງກັນ ແລະ ຄົ້ນຄ້ວາຂະຫຍາຍລາຍການ ສິນຄ້າ ທີ່ໄດ້ຮັບອັດຕາພາສີຂາເຂົ້າ 0%.

- ສອງຝ່າຍສືບຕໍ່ແລກປ່ຽນບົດຮຽນ ກ່ຽວກັບຂະແໜງການທີ່ສອງຝ່າຍມີຄວາມສົນໃຈ ໃນການ ເຊື່ອມໂຍງເສດຖະກິດເຂົ້າກັບສາກົນ ແລະ ພາກພື້ນ (ໂດຍສະເພາະ ແມ່ນບົດຮຽນໃນການເຂົ້າເປັນ ສະມາຊິກອົງການ ການຄ້າໂລກ) ແລະ ການຄຸ້ມຄອງຕະຫລາດ.

- ສອງຝ່າຍເປັນເອກະພາບມອບໃຫ້ກະຊວງອຸດສາຫະກຳ - ການຄ້າຂອງສອງປະເທດ ເປັນໃຈ ກາງປະສານສົມທົບກັບບັນດາກະຊວງ, ຂະແໜງການທີ່ກ່ຽວຂ້ອງຂອງຕົນ ຄົ້ນຄ້ວາສ້າງກົນໄກ, ຂໍ້ກຳ ນົດ, ລະບຽບການຕ່າງໆ ເພື່ອສ້າງເງື່ອນໄຂສະດວກໃນການນຳສິນຄ້າ ຂອງສອງປະເທດເຂົ້າຮ່ວມງານ ວາງສະແດງສິນຄ້າ, ຕະຫລາດນັດຕ່າງໆ ແລະ ໂຄສະນາສິນຄ້າ ໃຫ້ມີປະສິດທິຜົນສູງ.

- ສອງຝ່າຍສະໜັບສະໜູນ ແລະ ສ້າງເງື່ອນໄຂສະດວກໃຫ້ແກ່ບັນດາວິສາຫະກິດ ລົງທຶນສ້າງ ສູນການຄ້າຂອງຫວຽດນາມຢູ່ລາວ ແລະ ສູນການຄ້າຂອງລາວ ຢູ່ຫວຽດນາມ, ສ້າງບັນດາເຂດຕິວ ເມືອງການຄ້າຂອງຫວຽດນາມ ຢູ່ນະຄອນຫລວງວຽງຈັນ, ຫລວງພະບາງ ແລະ ສະຫວັນນະເຂດ .

- ສອງຝ່າຍສືບຕໍ່ຕີລາຄາ, ຖອດຖອນບົດຮຽນກ່ຽວກັບການສ້າງ "ເຂດເສດຖະກິດການຄ້າ ລາວບາວ-ແດນສະຫວັນ"ເພື່ອໄປນຳໃຊ້ຢູ່ເຂດເສດຖະກິດດ່ານເບີອີ-ໝູເກືອ ແລະ ດ່ານໄຕຈາງ-ສີບຮຸ່ນ.

6.2- ດ້ານການລົງທຶນ:

- ສອງຝ່າຍປະສານສົມທົບສ້າງແຜນການຮ່ວມມື ດ້ານການລົງທຶນໃນຊຸມປີຕໍ່ໜ້າ, ຊອກຫາ ນາດຕະການ ເພື່ອເຮັດໃຫ້ເຫງົ້າພະລັງການລົງທຶນ ມີຫລາຍຮູບການທີ່ເໝາະສົມ; ຊອກຫາວິທີການເປີດ ກ້ວາງການລົງທຶນ ໃນຂົງເຂດຕ່າງໆ ເຂົ້າແຕ່ລະປະເທດ ໂດຍໄວ.

- ສອງຝ່າຍສົ່ງເສີມບັນດາວິສາຫະກິດລົງທຶນເຂົ້າໃນການຂະແໜງການອຸດສາຫະກຳ, ກະສິກຳ ແລະ ການບໍລິການ ແນໃສ່ສ້າງວຽກເຮັດງານທຳ, ເພີ່ມລາຍຮັບ ຫລຸດຜ່ອນຄວາມທຸກຍາກ ໃຫ້ແກ່ປະຊາ ຊົນ, ປະກອບສ່ວນເຮັດໃຫ້ສັງຄົມມີສະຖຽນລະພາບ, ເພີ່ມລາຍຮັບໃຫ້ແກ່ງົບປະມານແຫ່ງຊາດ ແລະ ເພີ່ມມູນຄ່າຂາອອກ - ຂາເຂົ້າ.

- ສອງຝ່າຍສ້າງກົນໄກ, ນະໂຍບາຍບູລິມະສິດຜ່ອນຜັນ ໂດຍສອດຄ່ອງກັບຂໍ້ກຳນົດຂອງອົງການ ການຄ້າໂລກ (WTO) ເພື່ອເປັນພື້ນຖານໃຫ້ແກ່ການສ້າງຕັ້ງບັນດາເຂດປຸງແຕ່ງເພື່ອສົ່ງອອກ, ເຂດເສດຖະກິດເປີດ, ເຂດເສດຖະກິດພິເສດ ລຽບຕາມບັນດາເສັ້ນທາງເຊື່ອມຕໍ່ລະຫວ່າງສອງປະເທດ.

- ສອງຝ່າຍສົ່ງເສີມນັກທຸລະກິດໜຸ່ມຂອງສອງປະເທດ ຮ່ວມມືລົງທຶນ ແລະ ຊ່ວຍຊູຢູ່ໜູນກັນ ເພື່ອເພີ່ມທະວີກຳລັງຄວາມສາມາດ; ສົ່ງເສີມບັນດາວິສາຫະກິດ ສ້າງຕັ້ງຊ່ວຍໜູນດ້ານການພັດທະນາ ຊັບພະຍາກອນມະນຸດ ແລະ ກໍ່ສ້າງພື້ນຖານໂຄງລ່າງຢູ່ທ້ອງຖິ່ນຕ່າງໆ.

- ຂົງເຂດພະລັງງານໄຟຟ້າ: ສອງຝ່າຍສືບຕໍ່ສ້າງເງື່ອນໄຂສະດວກ ໃຫ້ແກ່ບັນດາວິສາຫະກິດ ຫວຽດນາມ ຜັນຂະຫຍາຍບັນດາໂຄງການລົງທຶນກໍ່ສ້າງເຂື່ອນໄຟຟ້ານ້ຳຕົກ ທີ່ໄດ້ເຊັນ MOU ນຳກັນ ແລ້ວ, ເຊັ່ນ: ໂຄງການເຊຂະໝານ 3, ກຸ່ມໂຄງການໄຟຟ້ານ້ຳຕົກເຊຂະໝານ 1, ເຊຂະໝານຊານໄຊ, ເຊຂະໝານ 4, ໂຄງການໄຟຟ້ານ້ຳຕົກແມ່ນ້ຳຂອງຈຸດຫລວງພະບາງ, ດັກອີເມີນ ແລະ ໂຄງການອື່ນໆ ຕາມທີ່ໄດ້ຕົກລົງກັນ, ເຊັ່ນ: ໂຄງການນ້ຳໂມ້, ເຊກອງ 3, ນ້ຳກົ່ນ; ຮ່ວມມືຄົ້ນຄ້ວາ ກໍ່ສ້າງລະບົບສາຍສົ່ງໄຟຟ້າ; ປະສານສົມທົບກວດກາ, ກຳນົດຄວາມອາດສາມາດປິ່ນຊ້ອນ ຂອງບັນດາໂຄງການໄຟຟ້ານ້ຳຕົກ, ເພື່ອກ້າວໄປເຖິງການເຊັນສັນຍາເພີ່ມເຕີມ ກ່ຽວກັບການຮ່ວມມື ພັດທະນາບັນດາໂຄງການພະລັງງານໄຟຟ້າ ແລະ ບໍ່ແຮ່ ທີ່ໄດ້ເຊັນກັນຄັ້ງວັນທີ 19 ເດືອນ 12 ປີ 2006 ລະຫວ່າງສອງລັດຖະບານ ຈາກ 3.000MW ຂຶ້ນເປັນ 5.000MW. ມອບໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ລາວ ແລະ ກະຊວງ ອຸດສະຫະກຳ - ການຄ້າ ຫວຽດນາມ ຄົ້ນຄ້ວາ ເປັນເອກະພາບກັນກ່ຽວກັບສາລະບານ ບັນດາໂຄງການ ໄຟຟ້າ ເພື່ອຈະນຳສະເໜີຂໍຄຳຕົກລົງຈາກລັດຖະບານພາຍໃນໄຕມາດທີ I ປີ 2008 ໂດຍຖືເອົາ ສາລະບານທີ່ລັດຖະບານຈະຮັບຮອງເອົານັ້ນ ເປັນເອກະສານຊ້ອນທ້າຍເລກ 4 ຂອງສັນຍາສະບັບນີ້.

- ໃນຂົງເຂດຊອກຄົ້ນ, ສຳຫລວດ, ຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ: ສອງຝ່າຍເຫັນດີຊຸກຍູ້ ບໍລິສັດ Vinachem ປະຕິບັດການສ້າງບົດວິພາກເສດຖະກິດ - ເຕັກນິກ ຂອງໂຄງການຂຸດຄົ້ນບໍ່ເກືອ ກາລີ ກວມເນື້ອທີ່ 10 ກິໂລແມັດມົນທົນ (Km^2) ເພື່ອສົ່ງໃຫ້ຝ່າຍລາວ ພິຈາລະນາຮັບຮອງ ໂດຍໄວ; ຝ່າຍຫວຽດນາມ ສະເໜີຝ່າຍລາວ ອອກອະນຸຍາດໃຫ້ແກ່ບໍລິສັດ Vinachem ດຳເນີນການສຳຫລວດ ເພີ່ມ ໃນເນື້ອທີ່ 11,2 ກິໂລແມັດມົນທົນ (Km^2) ແລະ 196,3 ກິໂລແມັດມົນທົນ (Km^2) ເພື່ອເປີດ ກ້ວາງການຊອກຄົ້ນ ແລະ ກ້າວໄປເຖິງການລົງທຶນ ຂຸດຄົ້ນເກືອກາລີ ຢູ່ແຂວງຄຳມ່ວນ.

ສອງຝ່າຍເປັນເອກະພາບກັນອຳນວຍຄວາມສະດວກ ແລະ ອອກອະນຸຍາດໃຫ້ແກ່ ບັນດາວິສາຫະກິດຫວຽດນາມ ປະຕິບັດການຊອກຄົ້ນ, ສຳຫລວດ ແລະ ລົງທຶນຂຸດຄົ້ນແຮ່ທາດ ເຊັ່ນ: ແຮ່ບົກຊິດ ຢູ່ເຂດດາກຈຶງ, ເມືອງດາກຈຶງ, ແຂວງເຊກອງ; ແຮ່ຊີນ - ສັງກະສີ ຢູ່ເຂດດາກຊຽງ, ເມືອງຊານໄຊ, ແຂວງອັດຕະປື; ແຮ່ເຫລັກ ແລະ ໂລຫະປະສົມ ຢູ່ແຂວງຊຽງຂວາງ, ຫົວພັນ ແລະ ແຂວງວຽງຈັນ.

ຝ່າຍຫວຽດນາມ ສະເໜີຝ່າຍລາວ ໄດ້ພິຈາລະນາ ເອກະສານຂໍລົງທຶນ ແລະ ອອກອະນຸຍາດ ໃຫ້ແກ່ໂຄງການຈຳນວນໜຶ່ງ ໃນການຂຸດຄົ້ນ, ສຳຫລວດ ແລະ ກ້າວໄປເຖິງຂຸດຄົ້ນແຮ່ທາດຕ່າງໆ: ແຮ່ທອງ ຢູ່ແຂວງອັດຕະປື; ຖ່ານຫີນຢູ່ແຂວງຫລວງນ້ຳທາ ແລະ ອຸດົມໄຊ; ແຮ່ທອງ, ຊິນ, ສັງກະສີ, ກົ່ວ, ອ້າຍຕົ້ມຂອນ ຢູ່ບັນດາແຂວງຄຳມ່ວນ, ຫົວພັນ, ຊຽງຂວາງ, ອຸດົມໄຊ, ໄຊຍະບູລີ, ຈຳປາສັກ, ເຊກອງ ແລະ ອັດຕະປື; ເກືອບໍ່ (ເກືອນາຕູ) ຢູ່ແຂວງສະຫວັນນະເຂດ, ແຮ່ຫີນບາຣິດ ຢູ່ບັນດາແຂວງສະຫວັນນະ ເຂດ, ຫົວພັນ ແລະ ວຽງຈັນ. ນ້ຳມັນ-ອາຍແກັສທຳມະຊາດເຂດທີ່ງຮາບວຽງຈັນ ແລະ ໂຄງການອື່ນໆ.

ມອບໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ລາວ ແລະ ກະຊວງອຸດສະຫະກຳ-ການຄ້າຫວຽດນາມ ຄົ້ນຄ້ວາ ເປັນເອກະພາບກັນກ່ຽວກັບສາລະບານບັນດາໂຄງການບໍ່ແຮ່ ເພື່ອຈະນຳສະເໜີຂໍຄຳຕົກລົງ ຈາກລັດຖະບານ ພາຍໃນໄຕມາດທີ I ປີ 2008 ໂດຍຖືເອົາສາລະບານທີ່ລັດຖະບານຈະຮັບຮອງເອົາ ນັ້ນ ເປັນເອກະສານຊ້ອນທ້າຍເລກ 5 ຂອງສັນຍາສະບັບນີ້.

- ການລົງທຶນໃນຂົງເຂດກະສິກຳ - ປ່າໄມ້: ສອງຝ່າຍສ້າງເງື່ອນໄຂສະດວກ ດຶງດູດແຫລ່ງການ ລົງທຶນ ຂອງພາກສ່ວນເສດຖະກິດຕ່າງໆ ເພື່ອຜະລິດບັນດາຊະນິດສິນຄ້າ ສົ່ງອອກທີ່ມີທ່າແຮງ; ສົ່ງເສີມ ບັນດາວິສາຫະກິດຫວຽດນາມ ລົງທຶນໃນຂົງເຂດປູກຕົ້ນຢາງພາລາ ແລະ ຕົ້ນໄມ້ອຸດສາຫະກຳອື່ນໆ, ສ້າງເປັນເຂດວັດຖຸດິບຮັບໃຊ້ໃຫ້ແກ່ການປຸງແຕ່ງ; ສອງຝ່າຍປະສານສົມທົບປະຕິບັດໂຄງການລົງທຶນ ປູກຕົ້ນຢາງພາລາໃຫ້ໄດ້ 100.000 ເຮັກຕາ ໃນຊຸມປີຕໍ່ໜ້າ, ການລ້ຽງສັດ, ປົກປັກຮັກສາປ່າໄມ້ ແລະ ມີບັນດາມາດຕະການສະກັດກັ້ນ ການຕັດໄມ້ທຳລາຍປ່າ, ປົກປັກຮັກສາສິ່ງແວດລ້ອມ, ຊີວະນາໆພັນ ຕິດພັນກັບການຈັດຕັ້ງພູມລຳເນົາຄົງທີ່; ສົ່ງເສີມການລົງທຶນກໍ່ສ້າງບັນດາໂຮງງານປຸງແຕ່ງຜະລິດຕະພັນ ກະສິກຳ, ຢາງພາລາ ແລະ ຕົ້ນໄມ້ອຸດສາຫະກຳອື່ນໆ.

- ການລົງທຶນໃນຂົງເຂດການຄົມມະນາຄົມ: ລັດຖະບານທັງສອງ ມອບໃຫ້ບັນດາກະຊວງ, ຂະແໜງການທີ່ກ່ຽວຂ້ອງ ກຳນົດລ່ວມຍອດມູນຄ່າ ແລະ ແບບວິທີໃຫ້ທຶນ ເພື່ອກໍ່ສ້າງເສັ້ນທາງ 2E ແຕ່ ເມືອງຂວາຫາໄຕຈາງ ເພື່ອເຊັນສັນຍາສິນເຊື່ອ ແລະ ລົງມື ກໍ່ສ້າງໂດຍໄວ.

- ຝ່າຍຫວຽດນາມ ຍິນດີພິຈາລະນາດັດແກ້ແຜນກຳນົດທ່າເຮືອຫວຸງອ່າງພ້ອມດ້ວຍບັນດາ ຂົວທຸ່ນເຮືອ ແລະ ເຂດຮອງຮັບ ເພື່ອຕອບສະໜອງຄວາມຕ້ອງການໃນການຂົນສົ່ງຜ່ານແດນລະຫວ່າງ ສອງປະເທດຫວຽດນາມ ແລະ ລາວ ໂດຍຄິດໄລ່ເຖິງຄວາມຕ້ອງການໃນການຂົນສົ່ງຂອງບັນດາແຂວງ ພາກອີສານ ຂອງໄທ, ການເຊື່ອມຕໍ່ແລວທາງເສດຖະກິດຕາເວັນອອກ - ຕາເວັນຕົກ ແລະ ການເຊື່ອມ ໂຍງເຂົ້າກັບພາກພື້ນ; ມອບໃຫ້ບັນດາວິສາຫະກິດສອງປະເທດຮ່ວມມືກັນສ້າງໂຄງການລົງທຶນ ກໍ່ສ້າງ ບັນດາຂົວທຸ່ນເຮືອ ແລະ ເຂດຮອງຮັບ ຢູ່ທ່າເຮືອຫວຸງອ່າງ.

- ສອງຝ່າຍ ເປັນເອກະພາບມອບໃຫ້ ກະຊວງຄົມມະນາຄົມ-ຂົນສົ່ງຂອງຫວຽດນາມ ແລະ ກະຊວງໂຍທາທິການ ແລະ ຂົນສົ່ງຂອງລາວ ເປັນເຈົ້າການປະສານສົມທົບກັບບັນດາອົງການ, ພາກ

ສ່ວນທີ່ກ່ຽວຂ້ອງ ຄົ້ນຄ້ວາ, ນຳສະເໜີຮູບການລົງທຶນກໍ່ສ້າງເສັ້ນທາງລົດໄຟ ແຕ່ທ່າແຂກຫາມຢຸ ເຊື່ອມຕໍ່ລະຫວ່າງສອງປະເທດ.

6.3- ດ້ານການເງິນ, ທະນາຄານ:

- ສອງຝ່າຍເປັນເອກະພາບ ກ່ຽວກັບການແລກປ່ຽນບົດຮຽນ, ການຝຶກອົບຮົມ, ຊ່ວຍລາວສ້າງ ແລະ ພັດທະນາຕະຫລາດຫລັກຊັບ.

- ສອງຝ່າຍ ສົ່ງເສີມບັນດາວິສາຫະກິດຮ່ວມມືສ້າງຕັ້ງບໍລິສັດຮ່ວມທຸລະກິດໃນຂົງເຂດທະນາຄານ, ປະກັນໄພ, ບໍລິການ ການເງິນ.

6.4- ດ້ານໂທລະຄົມມະນາຄົມ - ເຕັກໂນໂລຢີ ຂໍ້ມູນຂ່າວສານ:

ສອງຝ່າຍເປັນເອກະພາບ ອອກອະນຸຍາດລົງທຶນ ແລະ ສ້າງເງື່ອນໄຂສະດວກໃນການຂັນຂະຫຍາຍໂຄງການຂອງບໍລິສັດຮ່ວມທຸລະກິດ Star Telecom ລະຫວ່າງ ບໍລິສັດ VIETTEL ແລະ ລາວ ເອເຊັຍໂທລະຄົມ (LAT) ແລະ ບັນດາໂຄງການລົງທຶນອື່ນໆ ໃນຂົງເຂດໂທລະຄົມມະນາຄົມ - ເຕັກໂນໂລຢີຂໍ້ມູນຂ່າວສານ.

ມາດຕາ 7

ການຄຸ້ມຄອງກິດຈະການ, ໂຄງການຊ່ວຍເຫລືອ

7.1- ໃຫ້ສຳເລັດການຊຳລະສະສາງໃຫ້ຂາດຕົວ ສຳລັບໂຄງການກໍ່ສ້າງລະບົບຊົນລະປະທານ ດົງໂພສີ, ລະບົບຊົນລະປະທານທ່າພະ - ໜອງພົງ; ໂຄງການກໍ່ສ້າງສູນຝຶກອົບຮົມພະນັກງານເສດຖະກິດ - ແຜນການວຽງຈັນ.

7.2- ສອງຝ່າຍເປັນເອກະພາບ ປະສານສົມທົບກັນເປັນປົກກະຕິ ເພື່ອດຳເນີນການກວດກາ ການປະຕິບັດບັນດາໂຄງການຮ່ວມມື ລະຫວ່າງສອງປະເທດ.

ມາດຕາ 8:

ການປະຕິບັດບັນດາຂໍ້ຕົກລົງ

- ສອງຝ່າຍເປັນເອກະພາບກັນ ຂັນຂະຫຍາຍ ແລະ ຕິດຕາມກວດກາ, ກວດການ ແລະ ລາຍງານການຈັດຕັ້ງປະຕິບັດຂໍ້ຕົກລົງຕ່າງໆ ຢ່າງເປັນປົກກະຕິ ໃນແຕ່ລະໄລຍະ.

- ສອງຝ່າຍສືບຕໍ່ອຳນວຍຄວາມສະດວກ ໃນການປະຕິບັດບັນດາໂຄງການຮ່ວມມື, ຮ່ວມ ສຳພັນດ້ານການຄົມມະນາຄົມ ຂົນສົ່ງ ທາງບົກ ແລະ ທາງອາກາດ ລະຫວ່າງສອງປະເທດ.

- ສອງຝ່າຍສືບຕໍ່ປະຕິບັດຂໍ້ຕົກລົງກ່ຽວກັບການນຳໃຊ້ທ່າເຮືອຫວຸງອ່າງ ທີ່ໄດ້ເຊັນກັນຄັ້ງວັນທີ 20 ເດືອນ 07 ປີ 2001, ຝ່າຍຫວຽດນາມ ສ້າງເງື່ອນໄຂສະດວກ ແລະ ຫລຸດຜ່ອນຄ່າທຳນຽມຕ່າງໆ ເພື່ອໃຫ້ຝ່າຍລາວ ນຳໃຊ້ທ່າເຮືອຫວຸງອ່າງຢ່າງມີປະສິດທິຜົນ.

- ສອງຝ່າຍປະສານສົມທົບດັດແກ້ສັນຍາ, ອະນຸສັນຍາການຂົນສົ່ງທາງບົກ ແລະ ເນື້ອໃນຕ່າງໆ ທີ່ກ່ຽວຂ້ອງໃຫ້ສອດຄ່ອງກັບ " ຂໍ້ຕົກລົງຮ່າໂນ້ຍ 2007 " ແລະ ບັນດາຂໍ້ຕົກລົງທີ່ໄດ້ເຊັນກັນ ໃນຂອບການຮ່ວມມື ຂອງອະນຸພາກພື້ນແມ່ນ້ຳຂອງເປີດກ້ວາງ (GMS).

- ຫວຽດນາມ ສືບຕໍ່ສະໜອງກະແສໄຟຟ້າໃຫ້ແກ່ລາວ ຢູ່ບັນດາເຂດລຽບຕາມຊາຍແດນຕິດກັບ ຫວຽດນາມ ຕາມຂໍ້ຜູກພັນທີ່ໄດ້ເຊັນກັນ ແລະ ຄົ້ນຄ້ວາຄວາມອາດສາມາດຂາຍກະແສໄຟຟ້າໃຫ້ແກ່ ເຂດອື່ນໆ ຕາມຄວາມຕ້ອງການຂອງຝ່າຍລາວ.

- ມອບໃຫ້ຂະແໜງການພະລັງງານໄຟຟ້າຂອງສອງຝ່າຍ ຄົ້ນຄ້ວາ ພິຈາລະນາດັດແກ້ລາຄາຊື້ - ຂາຍກະແສໄຟຟ້າຂອງບັນດາໂຄງການເຂື່ອນໄຟຟ້ານ້ຳຕົກ ເຊິ່ງບັນດາວິສາຫະກິດຫວຽດນາມ ລົງທຶນຢູ່ ລາວ ໃຫ້ສົມເຫດສົມຜົນ.

- ສອງຝ່າຍສືບຕໍ່ໂຄງການກໍ່ສ້າງຜູ້ຊ່ຽວຊານດ້ານການຄຸ້ມຄອງ, ເຕັກໂນໂລຢີ ຕາມຂໍ້ຕົກລົງ ຮ່ວມມືດ້ານໂທລະຄົມມະນາຄົມ-ເຕັກໂນໂລຢີຂໍ້ມູນຂ່າວສານ ໄລຍະ 2005 - 2008; ຝ່າຍຫວຽດນາມ ກຽມພ້ອມຊ່ວຍເຫລືອດ້ານນະໂຍບາຍ, ວິຊາການຄຸ້ມຄອງ, ປ່ຽນແປງໃໝ່ໂຄງປະກອບການຈັດຕັ້ງ ກົງຈັກຄຸ້ມຄອງລັດ ຕາມຄວາມຕ້ອງການຂອງຝ່າຍລາວ.

- ສອງຝ່າຍປະສານສົມທົບປັບປຸງ " ຂໍ້ຕົກລົງກ່ຽວກັບລະບຽບການເງິນ ແລະ ການຄຸ້ມຄອງ ບັນດາກິດຈະການ, ໂຄງການທີ່ນຳໃຊ້ທຶນຊ່ວຍເຫລືອລ້າຂອງຫວຽດນາມ ໃຫ້ແກ່ລັດຖະບານລາວ" ທີ່ໄດ້ ລົງນາມຄັ້ງວັນທີ 15 ເດືອນ 01 ປີ 2002 ໃຫ້ສົມບູນ, ສອດຄ່ອງກັບກົນໄກ ນະໂຍບາຍທີ່ປະກາດໃຊ້ ໃນປະຈຸບັນຂອງແຕ່ລະປະເທດ.

- ສອງຝ່າຍປະສານສົມທົບກັນປະຕິບັດບັນດາຄຳໝັ້ນສັນຍາ ແລະ ການເຫັນພ້ອມກັນ ໃນບັນ ດາໂຄງການຮ່ວມມື ໃນຂອບ ASEAN, GMS, ACMECS, CLV, CLV+J, CLMV, ແລວທາງເສດ ຖະກິດຕາເວັນອອກ - ຕາເວັນຕົກ (EWEC),... ເຂົ້າສູ່ເປົ້າໝາຍການພັດທະນາ ແລະ ການຮ່ວມມືຂອງ ສອງປະເທດ; ສອງຝ່າຍຮ່ວມມືຢ່າງແໜ້ນແຟ້ນກັບບັນດາປະເທດທີ່ກ່ຽວຂ້ອງອື່ນໆ ປະຕິບັດສັນຍາ ແມ່ນ້ຳຂອງ ປີ 1995 ແນໃສ່ພັດທະນາ ແລະ ຄຸ້ມຄອງຊັບພະຍາກອນນ້ຳໃນອ່າງແມ່ນ້ຳຂອງໃຫ້ຍືນຍົງ.

- ສອງຝ່າຍເນັ້ນໜັກເຖິງຄວາມສຳຄັນ ກ່ຽວກັບການປົກປັກຮັກສາສິ່ງແວດລ້ອມໃນການເຄື່ອນໄຫວຮ່ວມມືພັດທະນາ.

- ສອງຝ່າຍເປັນເອກະພາບກັນ ກ່ຽວກັບການສ້າງເງື່ອນໄຂ ເພື່ອໃຫ້ສະຫະພັນບັນດານັກລົງທຶນຫວຽດນາມຢູ່ລາວ ແລະ ສະຫະພັນບັນດານັກລົງທຶນລາວຢູ່ຫວຽດນາມ ໄດ້ຮັບການສ້າງຕັ້ງຂຶ້ນ ໂດຍໄວ.

- ສອງຝ່າຍສືບຕໍ່ຄົ້ນຄ້ວາ, ນຳສະເໜີບັນດາກົນໄກ, ນະໂຍບາຍ ໃຫ້ສອດຄ່ອງກັບການພົວພັນສອງປະເທດ ແລະ ສະພາບການຂອງແຕ່ລະປະເທດ, ປະຕິບັດຂໍ້ຕົກລົງຮ່ຳໄພ 2007 ຢ່າງມີປະສິດທິຜົນ; ຮີບຮ້ອນສ້າງຍຸດທະສາດການພັດທະນາການພົວພັນລະຫວ່າງສອງປະເທດ ສຳລັບໄລຍະ 2011 - 2020 ເພື່ອເປັນບ່ອນອີງໃຫ້ແກ່ການສ້າງແຜນການຮ່ວມມື 5 ປີ ລະຫວ່າງສອງປະເທດ.

ມາດຕາ 9

ການຈັດຕັ້ງປະຕິບັດ

ສັນຍາສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ຈົນເຖິງມື້ເຊັນສັນຍາຄັ້ງຕໍ່ໄປ. ໃນໄລຍະປະຕິບັດສັນຍາສະບັບນີ້, ອາດມີການດັດແປງ ເພີ້ມເຕີມໄດ້ກໍ່ຕໍ່ເມື່ອມີການຕົກລົງເປັນລາຍລັກອັກສອນຂອງລັດຖະບານສອງປະເທດ. ບັນດາສາລະບານທີ່ຄັດຕິດມາພ້ອມນີ້ ແມ່ນສ່ວນປະກອບທີ່ບໍ່ສາມາດຕັດແຍກອອກຈາກເນື້ອໃນຂອງສັນຍາສະບັບນີ້.

ເຮັດທີ່ນະຄອນຫລວງວຽງຈັນ, ວັນທີ 10 ມັງກອນ(01) ປີ 2008, ເປັນສອງສະບັບຕົ້ນ ດ້ວຍພາສາຫວຽດ ແລະ ພາສາລາວ, ທັ້ງສອງສະບັບ ລ້ວນແຕ່ມີຄຸນຄ່າເທົ່າທຽມກັນ.

ຕາງໜ້າລັດຖະບານ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ	ຕາງໜ້າລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ທ່ານ ຫງວຽນ ຊີ ຊຸ່ງ, ຮອງ ນາຍົກລັດຖະມົນຕີ ຜູ້ປະຈຳການ	ສົມສະຫວາດ ເລ່ງສະຫວັດ ຮອງ ນາຍົກລັດຖະມົນຕີ ຜູ້ປະຈຳການ

ສາລະບານເລກ 1

ແຜນການນຳໃຊ້ທຶນຊ່ວຍເຫລືອລ້າ ຂອງລັດຖະບານຫວຽດນາມ ໃຫ້ແກ່ລັດຖະບານລາວ ປີ 2008

ຫົວໜ່ວຍ: ລ້ານດົ່ງຫວຽດນາມ.

ລ/ດ	ກິດຈະການ, ໂຄງການ	ໄລຍະປະຕິບັດ 2006 - 2010	ມູນຄ່າລວມ	ທຶນປີ 2008
I	ກໍ່ສ້າງພະນັກງານ, ນັກສຶກສາລາວ ຢູ່ຫວຽດນາມ	2006-2010	490.000	100.000
II	ບັນດາກິດຈະການ, ໂຄງການ			
ກ	ບັນດາໂຄງການ ທີ່ຕ້ອງຊຳລະສະສາງ ໃຫ້ຂາດຕົວ			26.780
1	ກໍ່ສ້າງລະບົບຊົນລະປະທານດົງໂພສີ	2000-2008	64.924	8.490
2	ກໍ່ສ້າງລະບົບຊົນລະປະທານທ່າພະ - ໜອງພົງ	2001-2008	58.390	9.310
3	ສູນຝຶກອົບຮົມພະນັກງານເສດຖະກິດ-ແຜນການວຽງຈັນ	2003 - 2005		8.980
ຂ	ບັນດາໂຄງການຍັງສືບຕໍ່			68.220
1	ກໍ່ສ້າງພະນັກງານການເງິນ ຢູ່ລາວ	2005-2008	4.000	1.000
2	ກໍ່ສ້າງໂຮງຮຽນວິທະຍາໄລການເງິນດົງ ຄຳຊ້າງວຽງຈັນ	2007-2008	59.080	26.462
3	ກໍ່ສ້າງສູນຝຶກກີລາແຫ່ງຊາດລາວ	2007-2009	68.824	31.000
4	ກໍ່ສ້າງເພີ່ມເຕີມໂຮງຮຽນວິຊາຊີບແຂວງ ບໍ່ແກ້ວໃຫ້ສົມບູນ	2007-2008	12.358	2.358
5	ຍົກລະດັບຄວາມສາມາດຂະແໜງ ການກິດລັບລາວ	2007-2008	4.600	1.600
6	ສ້າງຫລວດແຂ່ທາດ ຢູ່ພາກໃຕ້ລາວ	2005-2008	16.000	3.000
7	ສ້າງປົດວິພາກເສດຖະກິດ - ເຕັກນິກ ເສັ້ນທາງລົດໄຟທ່າແຂກ - ມູຢາ	2007-2008	1.100	800
8	ແຜນກຳນົດແບ່ງເຂດປູກຕົ້ນໄມ້ອຸດສາ ຫະກຳ ຢູ່ພາກໃຕ້ລາວ	2007-2009	4.400	2.000
9	ແປປຶ້ມນິພົນພາກ-ອ້ຽງແກນ-ເລນິນ ແລະ ແນວຄິດໄຮ່ຈິມິນ ເປັນພາສາລາວ	2008-2011	11.850	2.000 ນຳໃຊ້ທຶນຂອງ ປີ 2007 ໂອນມາ

10	ສ້ອມແປງຍົກລະດັບ ຫໍພິພິທະພັນ ໄກສອນ ພົມວິຫານ	2008-2009	32.753	15.000 ນຳໃຊ້ທຶນ ຂອງປີ2007ໂອນມາ
11	ຮຽບຮຽງປຶ້ມປະຫວັດສາດມູນເຊື້ອການພົວພັນ ພິເສດລາວ - ຫວຽດນາມ	2007 -		1.000 ນຳໃຊ້ທຶນ ຂອງປີ2007ໂອນມາ
12	ກໍ່ສ້າງສະຖານີຖ່າຍທອດໂທລະພາບເຂດ ຢູ່ແຂວງຈຳປາສັກ	2001-2009	40.227	10.800 ນຳໃຊ້ທຶນ ຂອງປີ2007ໂອນມາ
ຄ	ບັນດາກິດຈະການ, ໂຄງການໃໝ່			35.000
1	ກໍ່ສ້າງສູນວິທະຍາສາດເດັກນ້ອຍ, ກະຊວງ ປ້ອງກັນຄວາມສະຫງົບ.	2008-2009	24.724	15.000
2	ກໍ່ສ້າງໂຮງຮຽນຊັ້ນສູງສິນລະປະ, ດົນຕີແຫ່ງຊາດ ວຽງຈັນ	2008-2009	49.230	20.000
	ລວມ (I + II)			230.000
III	ບັນດາໂຄງການເພີ່ມທຶນເພື່ອປະຕິບັດໃນປີ 2008			
1	ກໍ່ສ້າງໂຮງຮຽນມັດທະຍົມມິດຕະພາບລາວ - ຫວຽດນາມ(ຂອງຂ້ວນຂອງເລຂາທິການໃຫຍ່)	2008-2009	34.843	25.000 (ນອກບ້ວງ ທຶນ 900ຕື້ກີ້ງ)
2	ກໍ່ສ້າງສວນສາທາລະນະ ໄຊເສດຖາ ທີ່ສະໜາມ ຫລວງທາດຫຼວງ	2008-2010		ນອກບ້ວງທຶນ 900ຕື້
3	ໂຄງການປັກຫລັກໝາຍຖີ ແລະ ສ້ອມແປງ ບູລະນະ ລະບົບຫລັກໝາຍຊາຍແດນປະເທດ ລາວ-ຫວຽດນາມ.	2008-2015	10,234 ລ້ານ USD	ນອກບ້ວງທຶນ 900ຕື້
4	ກໍ່ສ້າງດ່ານສາກົນພູເກົ້ອ, ແຂວງອັດຕະປື	2008-2009	18.000	
5	ກໍ່ສ້າງສະຖານີຖ່າຍທອດວິທະຍຸ, ໂທລະພາບ ເຂດ ຢູ່ແຂວງຫຼວງພະບາງ	2008-2009	41.000	
IV	ບັນດາກິດຈະການ, ໂຄງການກະກຽມໃນປີ 2008 (ນຳໃຊ້ທຶນຊ່ວຍໜູນການຮ່ວມມືເພື່ອກະກຽມ)		*ຄາດຄະເນ ມູນຄ່າລວມ*	
1	ກໍ່ສ້າງສະຖາບັນການເມືອງ-ການປົກຄອງ ແຫ່ງຊາດ		*47.000*	
2	ຟື້ນຟູໂຮງພິມແຜນທີ່ກອງທັບປະຊາຊົນລາວ		*15.000*	
3	ຊ່ວຍໜູນວຽກງານດູແລແມ່ ແລະ ເດັກ		*1.000*	
	ລວມມູນຄ່າຄາດຄະເນ		*63.000*	

<u>ໝາຍເຫດ</u>: ຖ້າໄດ້ຮັບການບັນຈຸທຶນໂລດ ໃນປີ 2008.

ສາລະບານເລກ 2

ຄາດຄະເນແຜນການນຳໃຊ້ທຶນຊ່ວຍເຫລືອເພີ່ມເຕີມ ຈຳນວນ 300 ຕື້ດົ່ງ ຂອງລັດຖະບານຫວຽດນາມ ໃຫ້ແກ່ລັດຖະບານ ລາວ ສຳລັບຊຸມປີ 2008, 2009 ແລະ 2010

ຫົວໜ່ວຍ: ລ້ານດົ່ງຫວຽດນາມ

ລ/ດ	ບັນດາກິດຈະການ, ໂຄງການ	ທຶນຄາດຄະເນ	ໝາຍເຫດ
1	ດ່ານກວດກາຊາຍແດນພູເກືອ, ແຂວງອັດຕະປື	18.000	
2	ກໍ່ສ້າງສະຖານີຖ່າຍທອດວິທະຍຸ, ໂທລະພາບເຂດ ຢູ່ແຂວງຫລວງພະບາງ	41.000	
3	ແຜນກຳນົດແບ່ງເຂດປູກຕົ້ນໄມ້ອຸດສາຫະກຳ ຢູ່ພາກໃຕ້ລາວ.	5.000	
4	ລົງທຶນຟື້ນຟູໂຮງພິມແຜນທີ່ກອງທັບປະຊາຊົນລາວ	15.000	
5	ຊ່ວຍໜູນວຽກງານດູແລແມ່ ແລະ ເດັກ	1.000	
6	ລົງທຶນກໍ່ສ້າງສະຖາບັນການເມືອງ - ການປົກຄອງ ແຫ່ງຊາດທ່າງ່ອນ.	47.000	
7	ກໍ່ສ້າງສູນສຳເນົາເອກະສານແຫ່ງຊາດລາວ	20.000	
8	ໂຄງການປັກຫລັກໝາຍຖີ ແລະ ສ້ອມແປງ, ບູລະນະ ລະບົບຫລັກໝາຍຊາຍແດນປະເທດ ລາວ - ຫວຽດນາມ (ພຸດຊ່ວຍເຫລືອລາວ).	72.000	ປະຕິບັດພາຍໃນ 7ປີ, ເລີ່ມ ແຕ່ປີ 2008 ເປັນຕົ້ນໄປ, ແຕ່ລະປີຕ້ອງການ 24 ຕື້ດົ່ງ.
9	ກໍ່ສ້າງສວນສາທາລະນະ ໄຊເສດຖາ ທີ່ສະໜາມ ຫລວງທາດຫລວງ.	81.000	ປະມານ 5 ລ້ານ USD.
	ລວມທັງໝົດປະມານ	300.000	ສາມຮ້ອຍຕື້ດົ່ງຫວຽດນາມ

ສາລະບານເລກ 3

ແຜນບຳລຸງ-ກໍ່ສ້າງພະນັກງານ, ນັກສຶກສາລາວຢູ່ ສສ ຫວຽດນາມ ປະຈຳປີ 2008

ລ/ດ	ຊື່ສະແໜງການຕ່າງໆ ແລະ ວິຊາຮຽນ	ຈຳນວນ ລວມ	ໄລຍະຍາວ			ໄລຍະສັ້ນ	ໝາຍເຫດ		
			ປີ	ໄຫ	ເອກ	ຈຳນວນທີ່ນ	ກຳນົດເວລາ	ພະນັກງານ	ນັກສຶກສາ
I	*ສົ່ງເຂດການເມືອງ ແລະ ສົ່ງການປະຕິວັດ*	*181*		*30*	*6*	*145*		*ພ/ງ*	
1	ທິດສະດີການເມືອງ	40		15	5	20	5 ເດືອນ	ພ/ງ	
2	ການປົກຄອງ(ສະຖາບັນການປົກຄອງແຫ່ງຊາດ)	36		15	1	20	3 ເດືອນ	ພ/ງ	
3	ປະຣິນຍາຕີສົມບູນ 1 ປີ	16				16	1 ປີ	ພ/ງ	
4	ວຽກງານກວດກາ	17				17	3 ເດືອນ	ພ/ງ	
5	ວຽກງານແມ່ຍິງ	17				17			
6	ວຽກງານຊາວໜຸ່ມ	17				17			
7	ວຽກງານພົວພັນການຕ່າງປະເທດ	17				17			
8	ບຳລຸງຄູ-ອາຈານສອນໂຮງຮຽນການເມືອງ	21				21			
II	*ສົ່ງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ*	*140*				*47*			
1	ປ້ອງກັນຊາດ (ປ້ອງກັນປະເທດ)	80				30		ພ/ງ	
2	ປ້ອງກັນຄວາມສະຫງົບ	60				17		ພ/ງ	
III	*ຄົ້ນຄວ້າປະຣິນຍາໄຫ-ເອກ ສົ່ງເຂດ ວິທະຍາສາດທົ່ວໄປ*	*40*		*29*	*11*				
1	*ສະແໜງການສຶກສາ*								
	ອີເລັກໂຕນິກ-IT			1				ພ/ງ	
	ເຄມີສາດ			1				ພ/ງ	
	ຄະນິດສາດ			1	1			ພ/ງ	
	ວັນນະຄະດີ-ພາສາອັງກິດ			1					
	ຟີຊິກ			1					
	ປະຫວັດສາດ				1				
2	*ສະແໜງກະສິກຳ-ປ່າໄມ້*								
	ຢາງພາລາ			1				ພ/ງ	
	ປຸ່ງແຕ່ງກາເຟ-ຊາ			1				ພ/ງ	
	ຄຸ້ມຄອງນຳໃຊ້ຊີນລະປະທານ				1			ພ/ງ	
3	ອຸດສະຫະກຳ-ການຄ້າ								
	ເສດຖະກິດການຄ້າ			1	1			ພ/ງ	
	ຄຸ້ມຄອງອຸດສະຫະກຳ			1				ພ/ງ	
	ກິດໝາຍການຄ້າ			1				ພ/ງ	
	ເສດຖະສາດ (ບໍລິຫານທຸລະກິດ)			1	1			ພ/ງ	
4	*ສະແໜງແຜນການ*								
	ວາງແຜນເສດຖະກິດ ແລະ ຄຸ້ມຄອງເສດ ຖະກິດແຜນການ			2	1				ລູກທ່ານ ຄ້າແວວ

5	ສຳເນົາເອກະສານແຕ່ງຕັ້ງ									ສຍ
	ວັດແຫ່ງແຕ້ມຫີ			1						
	ສຳເນົາເອກະສານແຕ່ງຕັ້ງ				1					
6	ການທະນາຄານ								ສ/ງ	
	ການເງິນທະນາຄານ (ຕະຫຼາດຫຼັກຊັບ)			1	1				ສ/ງ	
	ເຂດຖະຫລາດ			1						
7	ຂະແໜງຖະແຫຼງຂ່າວ ແລະ ວັດທະນະທຳ								ສ/ງ	
	ນັກຂ່າວ			1					ສ/ງ	
	ເຕັກນິກສື່ນວນຊິນ			1						
	ວັດທະນະທຳ			2	1					
8	ຂະແໜງການຕ່າງປະເທດ								ສ/ງ	
	ການພົວພັນຕ່າງປະເທດ			1						
	ກົດໝາຍສາກົນ			1						
9	ການເງິນ									
	ຂະແໜງການເງິນ			1						
	ເຂດຖະກິດການເງິນ			1	1					
10	ຂະແໜງສາທາລະນະສຸກ									
	ການແພດພື້ນເມືອງ			1						
	ການຄຸ້ມຄອງຕົ້ນໄມ້ທີ່ເປັນຢາ			1						
	ສາທາລະນະສຸກສາດ				1					ແຕ່ນການ
	ທັນຕະແພດ			1						
11	ຂະແໜງໄປສະນີ ແລະ ໂທລະຄົມມະນາຄົມ									ສ/ງ ເອທີແອວ
	ໄອທີ ຫຼື ໂທລະຄົມ			2						
IV	ສິ່ງເຂດການສຶກສາ, ວັດທະນະທຳ, ຕຸລາການ ແລະ ກິລາກາຍຍະກຳ	158								
1	ວິທີສິດສອນຄະນິດສາດມັດທະຍົມຕອນປາຍ	15				15	3 ເດືອນ			
2	ຜູ້ບໍລິຫານການສຶກສາ ແລະ ບຳລຸງຄູວິຊາຊີບ	17				17	3 ເດືອນ			
3	ຝຶກອົບຮົມກິລາ, ກາຍຍະກຳ	100				100	6 ເດືອນ			
4	ວຽກງານໂຍຍະການ	17				17	3 ເດືອນ	ສ/ງ		
5	ວຽກງານຝຶກອົບຮົມເຮັດສາທຸນ	9				9	6 ເດືອນ	ສ/ງ		
V	ກຸ່ມພາສາຫວຽດນາມເພື່ອເຂົ້າຮຽນມະຫາວິທະຍາໄລ (ລວມທັງນະໂຍບາຍ 50 ຫຶ້ນ)	131								
1	ວຽກງານຈັດຕັ້ງຝຶ່ງສະຖາບັນການເມືອງເຂດໜຶ່ງ		20							ສ/ງ
2	ວຽກງານການເມືອງ (ຝຶ່ງສະຖາບັນຮ່ຳວສານ)		20							ສ/ງ
3	ວຽກງານການປົກຄອງ (ຝຶ່ງສະຖາບັນການປົກຄອງແຫ່ງຊາດ)		20							ສ/ງ
4	ຂະແໜງກະສິກຳ									
	ຊິນລະປະທານ		1							
	ດ້ານແມງໄມ້		1							
	ວິຊາສັດຕະວະແພດ		1							
	ຕົ້ນໄມ້ໃຫ້ໝາກ		1							
	ປູກຕົ້ນຢາງພາລາ		1							

5	ຂະແໜງພະລັງງານ-ບໍ່ແຮ່									
	ສຳຫຼວດບໍ່ແຮ່		3							
	ປຸງແຕ່ງແຮ່		3							
	ຂຸດຄົ້ນແຮ່		2							
	ວິໃຈແຮ່		2							
	ກົດໝາຍບໍ່ແຮ່		2							
	ສິ່ງແວດລ້ອມບໍ່ແຮ່		2							
	ການວິເຄາະຖ່ານຫີນ		2							
	ເສດຖະກິດບໍ່ແຮ່		2							
	ໄຟຟ້າຄວາມຮ້ອນ		1							
	ໄຟຟ້ານ້ຳຕົກ		1							
	ຄຸ້ມຄອງເສດຖະກິດພະລັງງານ		2							
6	ຂະແໜງແຜນການ									
	ການວາງແຜນ ແລະ ຄຸ້ມຄອງໂຄງການ		2							
7	ຂະແໜງຖະແຫຼ່ງຂ່າວ									
	ວິຊາມັກຂ່າວ (ຂ່າວສານ)		5							
	ສ້າງຮູບເງົາ		2							
8	ຂະແໜງການຄ້າ ແລະ ອຸດສະຫະກຳ									
	ວິຊາບໍລິຫານທຸລະກິດ (ຂະແໜງການຄ້າ)		1							
	ວິຊາກົດໝາຍການຄ້າ		1							
	ເສດຖະກິດການຄ້າ		1							
	ວິຊາການຄ້າຕ່າງປະເທດ		1							
	ຄຸ້ມຄອງສິ່ງແວດລ້ອມ		1							
9	ຂະແໜງທ່ອງທ່ຽວ ແລະ ບໍລິການ									
	ຄຸ້ມຄອງການທ່ອງທ່ຽວ		1							
	ເສດຖະກິດທ່ອງທ່ຽວ		1							
	ທ່ອງທ່ຽວ ແລະ ໂຮງແຮມ		1							
10	ຂະແໜງການເງິນ									
	ດ້ານການເງິນສິນເຊື່ອ ແລະ ຕະຫຼາດຮຸ້ນ		2							
11	ຂະແໜງແຮງງານສະຫວັດດີການ									
	ຄຸ້ມຄອງແຮງງານ		1							
	ຄຸ້ມຄອງເສດຖະກິດ		2							
12	ຂະແໜງກຳມະບານ									
	ກຳມະບານ		3							
13	ຂະແໜງສັ່ງລວມ									
	ສຳເນົາເອກະສານ		2							
	ກົດລັບ		3							
14	ຂະແໜງສາທາລະນະສຸກ									
	ຄຸ້ມຄອງອະນາໄມ		1							

	ภาษาษะบำบัด		2						
	ວິເຄາະ		1						
15	ຂະແໜງໄຍທາທິການ ແລະ ຂົນສົ່ງ								
	ຂົນສົ່ງທາງບົກ, ນ້ຳ		2						
	ວິສະວະກອນກໍ່ສ້າງຊົນທາງ		1						
16	ຂະແໜງສຶກສາ								
	ພາລະສຶກສາ		2						
	ສ້າງຄູແຕ້ມ ແລະ ແກະສະຫຼັກ		1						
	ສ້າງຄູຟ້ອນ ແລະ ດົນຕີ		1						
	ສ້າງຄູລ້ຽງເດັກອະນຸບານ		1						
17	ຂະແໜງຕ່າງປະເທດ								
	ແປພາສາຫວຽດນາມ		2						
VI	*ນັກສຶກສາຊຸກຫຼານຊາວຫວຽດນາມຕ່າງວ້າວ*		*10*						
	ລວມທັ້ງໝົດ I+II+III+IV+V+VI	*650*							

ໝາຍເຫດ: ໄລຍະຍາວ 300 ຫົນ,
ໄລຍະສັ້ນ 350 ຫົນ, ໃນນັ້ນ: ທະຫານ, ຕຳຫລວດໄລຍະສັ້ນ 47 ຫົນ.